ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 1161 /ກອຫ.ມຖ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2016

## ແຈ້ງການ

***ຮຽນ*** : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

***ເລື່ອງ***: ແບບຟອມເອກະສານການຢັ້ງຢືນ ຜະລິດຕະພັນໄມ້ທຳມະຊາດ ແລະ ຜະລິດຕະພັນໄມ້ສວນປູກ ເພື່ອສົ່ງອອກ.

- ອີງຕາມຄຳສັ່ງສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້;
- ອີງຕາມຂໍ້ຕົກລົງສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຮັບຮອງເອົາ ລາຍການ (ບັນຊີ) ຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.
- ອີງຕາມຄຳສັ່ງແນະນຳ ສະບັບເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016 ກ່ຽວກັບຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດ ເພື່ອສົ່ງອອກຕ່າງປະເທດ.

ເພື່ອເປັນການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ຄຳສັ່ງແນະນຳ ສະບັບເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016 ໃຫ້ໄດ້ຮັບຜົນຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ທັງຮັບປະກັນຄວາມເປັນເອກະພາບ ໃນການປະຕິບັດວຽກງານຕົວຈິງ ໃນຂອບເຂດທົ່ວປະເທດ.

## ກົມອຸດສາຫະກຳ ແລະ ຫັດຖະກຳ ອອກແຈ້ງການ:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການໃນການກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ ຈາກປ່າທຳມະຊາດ ແລະ ຢັ້ງຢືນຜະລິດຕະພັນໄມ້ ຈາກສວນປູກ ເພື່ອສົ່ງອອກໂດຍຖືກຕ້ອງ ແລະ ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 01 ຂອງຂໍ້ຕົກລົງ ເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016, ຊຶ່ງນຳໃຊ້ແບບຟອມໃບຢັ້ງຢືນຄືດັ່ງນີ້:
   - 1.1 ການຢັ້ງຢືນຜະລິດຕະພັນໄມ້ ຈາກປ່າທຳມະຊາດ ເພື່ອສົ່ງອອກ ແມ່ນໃຫ້ນຳໃຊ້ແບບຟອມ (ອ.ຄ 01) ໂດຍສົມທົບກັບ ຄະນະກຳມະການຈາກ ຂະແໜງການເງິນ ແລະ ຂະແໜງການກະສິກຳ ແລະ ປ່າໄມ້.
   - 1.2 ການຢັ້ງຢືນຜະລິດຕະພັນໄມ້ ຈາກສວນປູກ ເພື່ອສົ່ງອອກ ແມ່ນໃຫ້ນຳໃຊ້ແບບຟອມ (ອ.ຄ 02) ໂດຍສົມທົບກັບຄະນະກຳມະການຈາກ ຂະແໜງການກະສິກຳ ແລະ ປ່າໄມ້.
2. ພາຍຫຼັງທີ່ຄະນະກຳມະການໄດ້ກວດກາທີ່ເຫັນວ່າແຫຼ່ງທີ່ມາຂອງຜະລິດຕະພັນໄມ້ ມີຄວາມຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດແລ້ວ ເປັນຕົ້ນ ການປະຕິບັດພັນທະຕ່າງໆ ຖືກຕ້ອງຄົບຖ້ວນແລ້ວ ຕ້ອງສືບຕໍ່ຕິດຕາມການນຳເອົາຜະລິດຕະພັນໄມ້ຂັ້ນລົດ ຫຼື ພາຫະນະຂົນສົ່ງ ທັງນີ້ກໍ່ເພື່ອຮັບປະກັນ ບໍ່ໃຫ້ມີການນຳເອົາຜະລິດຕະພັນໄມ້ ທີ່ຫ້າມສົ່ງອອກ ປະປົນໃສ່.

3. ຄະນະກຳມະການຕ້ອງແນະນຳໃຫ້ເຈົ້າຂອງຜະລິດຕະພັນໄມ້ ທີ່ຈະສົ່ງອອກ ຕ້ອງໄດ້ດຳເນີນການແຈ້ງຕໍ່ເຈົ້າໜ້າທີ່ ພາສີ ເພື່ອແຈ້ງພາສີຕາມກົດໝາຍ ແລະ ລະບຽບກຳນົດ ເມື່ອເວລາໄດ້ເຄື່ອນຍ້າຍຜະລິດຕະພັນໄມ້ຮອດດ່ານຊາຍແດນ.

4. ກໍລະນີເຈົ້າໜ້າທີ່ຢູ່ດ່ານຊາຍແດນ ກວດພົບເຫັນຜະລິດຕະພັນໄມ້ມາຈາກແຫຼ່ງອື່ນ ປະປົນຢູ່ນຳ ຫຼື ບໍ່ສອດຄ່ອງກັບເອກະສານຢັ້ງຢືນອະນຸຍາດໃນເບື້ອງຕົ້ນ, ແຕ່ສາຍລວດ ແລະ ເມັດກົ່ວຍັງມີສະພາບປົກກະຕິ ແມ່ນເປັນຄວາມຮັບຜິດຊອບຂອງຄະນະກຳມະການກວດກາຮ່ວມກັບເຈົ້າຂອງ ຜະລິດຕະພັນ ແລະ ເຈົ້າຂອງໂຮງງານ.

5. ກໍລະນີຖ້າຫາກມີການແກ້ໄຂ, ທຳລາຍ ຫຼື ປ່ຽນແປງສະພາບຂອງສາຍລວດ, ເມັດກົ່ວທີ່ໜີບໄວ້ ຫຼື ຕັດປັບລົດເພື່ອເອົາໄມ້ສອດໄສ້ ແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງຜະລິດຕະພັນ, ເຈົ້າຂອງໂຮງງານ ແລະ ຂອງເຈົ້າຂອງລົດ.

6. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງປະສານສົມທົບ ກັບພະແນກກະສິກຳ ແລະ ປ່າໄມ້, ພະແນກການເງິນ ເພື່ອພ້ອມກັນປະຕິບັດວຽກງານຕາມພາລະໜ້າທີ່ ດັ່ງທີ່ໄດ້ກຳນົດໄວ້ໃນ ຂໍ້ 3) ຂອງຄຳສັ່ງສະບັບເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016 ຢ່າງເຂັ້ມງວດ. ຄຽງຄູ່ກັນນີ້ກໍ່ຕ້ອງປະສານສົມທົບກັບເຈົ້າໜ້າທີ່ພາສີປະຈຳດ່ານ ແລະ ບັນດາໂຮງງານປຸງແຕ່ງໄມ້ ເພື່ອສົ່ງອອກ ໃຫ້ຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ.

7. ອະນຸຍາດໃຫ້ນຳໃຊ້ແບບຟອມໃບຢັ້ງຢືນ ຜະລິດຕະພັນໄມ້ ຈາກປ່າທຳມະຊາດ ເພື່ອສົ່ງອອກ " ອ.ຄ 01 " ແລະ ໃບຢັ້ງຢືນຜະລິດຕະພັນໄມ້ ຈາກສວນປູກ ເພື່ອສົ່ງອອກ " ອ.ຄ 02 " ຢ່າງເປັນທາງການນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ແບບຟອມເອກະສານອື່ນ ທີ່ແຕກຕ່າງຈາກນີ້, ຊຶ່ງລວມທັງແບບຟອມໃບຢັ້ງຢືນຕາມຄຳສັ່ງແນະນຳ ສະບັບເລກທີ 1153/ອຄ.ກຂອ ທີ່ໄດ້ຖືກລົບລ້າງແລ້ວນັ້ນ.

8. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ດ້ວຍຄວາມນັບຖື,

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ສົມພອງ ສຸວັນ

> **ສຳເນົານຳສົ່ງບ່ອນລະ 01 ສະບັບ**

1. ທ່ານ ລັດຖະມົນຕີ, ບັນດາ ທ່ານຮອງ ລັດຖະມົນຕີ; ເພື່ອຊາບ.
   ກະຊວງ ອຸດສາຫະກຳ ແລະ ການຄ້າ; ເພື່ອຊາບ.
2. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ເພື່ອຊາບ.
3. ອົງການກວດກາລັດຖະບານ; ເພື່ອຊາບ.
4. ກະຊວງການເງິນ; ເພື່ອຊາບ.
5. ກະຊວງ ກະສິກຳ ແລະ ປ່າໄມ້; ເພື່ອຊາບ.
6. ຫ້ອງວ່າການປົກຄອງ ແຂວງ, ນະຄອນຫຼວງ; ເພື່ອຊາບ.
7. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ; ເພື່ອຊາບ.

ອ.ຄ 01

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນຫຼວງ.......................................
ພະແນກອຸດສາຫະກຳ ແລະ ການຄ້າ ເລກທີ.....................
ລົງວັນທີ ...................................

# ໃບຢັ້ງຢືນ
# ຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ

– ອີງຕາມການສະເໜີຂອງໂຮງງານ/ບໍລິສັດ............................................................................................,
ເລກທີ....................................................., ລົງວັນທີ.......................................................................
ໃນວັນທີ............ເດືອນ............ປີ...............ເວລາ...........................ໂມງ, ໄດ້ມີຄະນະກຳມະການກວດກາ ແລະ
ຢັ້ງຢືນຜະລິດຕະພັນໄມ້ ເພື່ອສົ່ງອອກ, ຊຶ່ງປະກອບດ້ວຍຜູ້ຕາງໜ້າ ດັ່ງນີ້:

1. ທ່ານ.........................................................., ຕາງໜ້າ ຂະແໜງອຸດສາຫະກຳ ແລະ ການຄ້າ;
2. ທ່ານ.........................................................., ຕາງໜ້າ ຂະແໜງກະສິກຳ ແລະ ປ່າໄມ້;
3. ທ່ານ.........................................................., ຕາງໜ້າ ຂະແໜງການເງິນ;

**ໄດ້ພ້ອມກັນລົງກວດກາຜະລິດຕະພັນໄມ້**ຂອງໂຮງງານ/ບໍລິສັດ.................................................................
ຕັ້ງຢູ່: ບ້ານ................................, ເມືອງ................................., ແຂວງ/ນະຄອນຫຼວງ................................
ໂດຍຊ່ອງໜ້າ ທ່ານ ................................................, ໃນນາມ............................. ໂທລະສັບ..................,
ມືຖື.................. ເພື່ອສົ່ງອອກໄປປະເທດ.....................................ໂດຍຜ່ານດ່ານສາກົນຂາອອກ:.........................

## ລາຍລະອຽດດັ່ງນີ້:

### 1. ຂໍ້ມູນຂອງບໍລິສັດ/ໂຮງງານ

1.1 ໃບທະບຽນວິສາຫະກິດເລກທີ................................................, ລົງວັນທີ............................................
1.2 ໃບອະນຸຍາດດຳເນີນກິດຈະການໂຮງງານເລກທີ .............................., ລົງວັນທີ...........................................
1.3 ສັນຍາຊື້-ຂາຍວັດຖຸດິບໄມ້ (ປຸງແຕ່ງ,ແປຮູບ)ເລກທີ ........................, ລົງວັນທີ.............................................
1.4 ໃບຢັ້ງຢືນການສຳລະເງິນ ຄ່າພັນທະອາກອນເລກທີ ...................., ລົງວັນທີ.................................................
1.5 ບັນຊີ ໄມ້ທ່ອນເລກທີ......................................, ລົງວັນທີ..............................................................
1.6 ໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນຈາກສະໜາມ II ຫາ ສະໜາມ III ເລກທີ..................., ລົງວັນທີ.......................
1.7 ໃບຢັ້ງຢືນການເສຍອາກອນ (ຜະລິດຕະພັນໄມ້ແປຮູບ, ເຄິ່ງສຳເລັດຮູບ)ຈຳນວນ:.................................................

## 2. ຜະລິດຕະພັນໄມ້ ທີ່ຄະນະກຳມະການໄດ້ກວດກາ ມີລາຍລະອຽດ ດັ່ງນີ້:

ຫົວໜ່ວຍ ໂດລາ (USD)

| ລ/ດ | ລາຍການຜະລິດຕະພັນໄມ້ | ລະຫັດສິນຄ້າ (HS Code) | | ຊະນິດໄມ້ | ຈຳນວນ | ຫົວໜ່ວຍ | ຂະໜາດ (ຊມ) | | | ບໍລິມາດ ມ$^3$ | ບໍລິມາດທັງໝົດ ມ$^3$ | ນ້ຳໜັກລວມ ☐ ກລ ☐ ໂຕນ |
|---|---|---|---|---|---|---|---|---|---|---|---|---|
| | | *ລະຫັດເຄົ້າ (Heading) 4 ໂຕເລກ* | *ລະຫັດຍ່ອຍ (Sub-Heading) 8 ໂຕເລກ* | | | | ໜາ | ກວ້າງ | ຍາວ | | | |
| *(1)* | *(2)* | *(3)* | *(4)* | *(5)* | *(6)* | *(7)* | *(8)* | *(9)* | *(10)* | *(11)* | | *(12)* |
| 1. | ໄມ້ອັດປະສານ **(ຕົວຢ່າງ)** | 44.12 | 4412.94.00 | ຍາງ | 500 | ແຜ່ນ | 5 | 200 | 600 | 0.6 | 300 | |
| 2. | ໄມ້ປູພື້ນເຊື່ອມຕໍ່ປະສານ **(ຕົວຢ່າງ)** | 44.09 | 4409.90.00 | ໄມ້ດູ່ | 1000 | ຊິ້ນ | 2.5 | 20 | 400 | 0.02 | 20 | |
| 3. | | | | | | | | | | | | |
| 4. | | | | | | | | | | | | |
| 5. | | | | | | | | | | | | |
| 6. | | | | | | | | | | | | |
| 7. | | | | | | | | | | | | |
| 8. | | | | | | | | | | | | |
| 9. | | | | | | | | | | | | |
| ລວມ | | | | | | | | | | | | |

ບໍລິມາດລວມທັງໝົດ ຂຽນເປັນຕົວໜັງສື...................................................................................................................................

ມູນຄ່າລວມທັງໝົດ ຂຽນເປັນໜັງສື...........................................................................................................................................

**3. ຜະລິດຕະພັນໄມ້ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂຶນຂຶ້ນລົດ:**

ສີ: ............ປະເພດ: .............ຍີ່ຫໍ້:.....................ເລກທະບຽນ:....................ອອກຊີໂດຍ:...............................

ເລກຈັກ..................................ເລກຖັງ....................................ຊື່ຜູ້ຂັບລົດ:............................................

ເບີໂທລະສັບ:................................................

**ຄະນະກຳມະການ ໄດ້ໜີບກົ່ວ** ຈຳນວນ ...................... ຈຸດ, ຊຶ່ງມີລາຍລະອຽດດັ່ງນີ້:

1. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
2. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
3. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
4. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
5. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
6. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
7. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
8. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
9. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
10. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
11. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................
12. ຈຸດທີ...........ເລກລະຫັດກົ່ວ.........................., ບ່ອນທີ່ໜີບ............................................................

**ການຢັ້ງຢືນຜະລິດຕະພັນໄມ້ ເພື່ອສົ່ງອອກ** ໄດ້ເຮັດຂຶ້ນທີ່................................................, ວັນທີ ................ ໄດ້ກວດກາຄວາມຖືກຕ້ອງຕາມຊະນິດ, ຈຳນວນ ແລະ ບໍລິມາດຕົວຈິງແລ້ວ. ຫາກກໍລະນີກວດພົບເຫັນຢູ່ດ່ານສົ່ງອອກວ່າມີການເອົາໄມ້ຈາກແຫຼ່ງອື່ນມາປົນ ຫຼື ບໍ່ສອດຄ່ອງຕາມໃບຢັ້ງຢືນຜະລິດຕະພັນໄມ້ ເພື່ອສົ່ງອອກນີ້, ແຕ່ສາຍລວດ ແລະ ເມັດກົ່ວຍັງມີສະພາບປົກກະຕິ ແມ່ນເປັນຄວາມຮັບຜິດຊອບຂອງຄະນະກຳມະການກວດກາຮ່ວມກັບເຈົ້າຂອງໂຮງງານ. ກົງກັນຂ້າມ, ຖ້າຫາກມີການແກ້ໄຂ, ທຳລາຍ ຫຼື ປ່ຽນແປງສະພາບຂອງສາຍລວດ, ເມັດກົ່ວທີ່ໜີບໄວ້ ຫຼື ດັດປັບລົດເພື່ອເອົາໄມ້ສອດໄສ້ ແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງໂຮງງານ ແລະ ເຈົ້າຂອງລົດເປັນຜູ້ຮັບຜິດຊອບ. ດັ່ງນັ້ນ, ຄະນະກຳມະການກວດກາ ຈຶ່ງໄດ້ລົງລາຍເຊັນນີ້ໄວ້ຮ່ວມກັນເພື່ອເປັນຫຼັກຖານ.

**ຜູ້ອຳນວຍການໂຮງງານ/ບໍລິສັດ**

**ຄະນະກຳມະການກວດກາຜະລິດຕະພັນໄມ້ ເພື່ອສົ່ງອອກ**

1. ຊື່.................................................ລາຍເຊັນ........................
2. ຊື່.................................................ລາຍເຊັນ........................
3. ຊື່.................................................ລາຍເຊັນ........................

**ຢັ້ງຢືນ ແລະ ຮັບຮອງໂດຍ**
**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ**

ອ.ຄ 02

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນຫຼວງ......................................

ພະແນກອຸດສາຫະກຳ ແລະ ການຄ້າ ເລກທີ.....................

ລົງວັນທີ ...................................

# ໃບຢັ້ງຢືນ
# ຜະລິດຕະພັນໄມ້ ສວນປູກ ເພື່ອສົ່ງອອກ

– ອີງຕາມການສະເໜີຂອງໂຮງງານ/ບໍລິສັດ.....................................................................................,
ເລກທີ................................................................, ລົງວັນທີ..........................................................

ໃນວັນທີ.............ເດືອນ..............ປີ...............ເວລາ..........................ໂມງ, ໄດ້ມີຄະນະກຳມະການກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ຈາກສວນປູກ (ຂັ້ນລົດ) ຊຶ່ງປະກອບດ້ວຍຜູ້ຕາງໜ້າ ດັ່ງນີ້:

1. ທ່ານ......................................................................., ຕາງໜ້າ ຂະແໜງອຸດສາຫະກຳ ແລະ ການຄ້າ;
2. ທ່ານ........................................................................, ຕາງໜ້າ ຂະແໜງກະສິກຳ ແລະ ປ່າໄມ້;

**ໄດ້ພ້ອມກັນລົງກວດກາຜະລິດຕະພັນໄມ້** ຈາກສວນປູກຂອງໂຮງງານ/ບໍລິສັດ.........................................................
ຕັ້ງຢູ່: ບ້ານ........................, ເມືອງ........................, ແຂວງ/ນະຄອນຫຼວງ...................................................

ໂດຍຊ່ອງໜ້າທ່ານ ............................................, ໃນນາມ............................................ ໂທລະສັບ..............,

ມີຖື........................ເພື່ອສົ່ງອອກໄປປະເທດ.............................ໂດຍຜ່ານດ່ານສາກົນຂາອອກ:...........................

## ລາຍລະອຽດດັ່ງນີ້:

### 1. ຂໍ້ມູນຂອງບໍລິສັດ/ໂຮງງານ

1.1 ໃບທະບຽນວິສາຫະກິດເລກທີ ..................................................., ລົງວັນທີ........................................

1.2 ໃບອະນຸຍາດດຳເນີນກິດຈະການໂຮງງານເລກທີ................................, ລົງວັນທີ........................................

1.3 ການຈົດທະບຽນສັນຍາຊື້-ຂາຍ ເລກທີ............................................, ລົງງວັນທີ........................................

1.4 ໃບຢັ້ງຢືນການເສຍອາກອນເລກທີ..................................................,ລົງວັນທີ.........................................

1.5 ສັນຍາຊື້-ຂາຍວັດຖຸດິບໄມ້ (ປຸງແຕ່ງ,ແປຮູບ) ເລກທີ ........................., ລົງວັນທີ........................................

1.6 ສັນຍາຊື້-ຂາຍຜະລິດຕະພັນໄມ້ເລກທີ ..........................................., ລົງວັນທີ.........................................

1.7 ໃບອະນຸຍາດເຄື່ອນຍ້າຍໄມ້ທ່ອນຫຼື ແປຮູບເລກທີ.............................., ລົງວັນທີ........................................

1.8 ໃບແຈ້ງລາຄາເລກທີ............................................................., ລົງວັນທີ.........................................

## 2. ຜະລິດຕະພັນໄມ້ ສວນປູກ ທີ່ຄະນະກຳມະການໄດ້ກວດກາ ມີລາຍລະອຽດ ດັ່ງນີ້:

ຫົວໜ່ວຍ ໂດລາ (USD)

| ລ/ດ | ລາຍການຜະລິດຕະພັນໄມ້ | ລະຫັດສິນຄ້າ (HS Code) | | ຊະນິດໄມ້ | ຈຳນວນ | ຫົວໜ່ວຍ | ຂະໜາດ (ຊມ) | | | ບໍລິມາດ ມ$^3$ | ນ້ຳໜັກລວມ ກລ/ ໂຕນ |
|---|---|---|---|---|---|---|---|---|---|---|---|
| | | *ລະຫັດເຄົ້າ (Heading) 4 ໂຕເລກ* | *ລະຫັດຍ່ອຍ (Sub-Heading) 8 ໂຕເລກ* | | | | ໜາ | ກວ້າງ | ຍາວ | | |
| *(1)* | *(2)* | *(3)* | *(4)* | *(5)* | *(6)* | *(7)* | *(8)* | *(9)* | *(10)* | *(11)* | *(12)* |
| 1. | | | | | | | | | | | |
| 2. | | | | | | | | | | | |
| 3. | | | | | | | | | | | |
| 4. | | | | | | | | | | | |
| 5. | | | | | | | | | | | |
| 6. | | | | | | | | | | | |
| 7. | | | | | | | | | | | |
| 8. | | | | | | | | | | | |
| 9. | | | | | | | | | | | |
| ລວມ: | | | | | | | | | | | |

ບໍລິມາດລວມທັງໝົດ ຂຽນເປັນຕົວໜັງສື.......................................................................................................................................

ມູນຄ່າລວມທັງໝົດ ຂຽນເປັນໜັງສື...............................................................................................................................................

**3. ຜະລິດຕະພັນໄມ້ ສວນປູກ ທີ່ໄດ້ລະບຸໄວ້ໃນຕາຕະລາງ ໄດ້ຂົນຂຶ້ນລົດ:**

ສີ: ............ປະເພດ: .............ຍີ່ຫໍ້:...............ເລກທະບຽນ:..............ອອກຊື່ໂດຍ:.........................................

ເລກຈັກ............................ ເລກຖັງ................................ຊື່ຜູ້ຂັບລົດ:....................................................

ເບີໂທລະສັບ:.......................................

**ການຢັ້ງຢືນຜະລິດຕະພັນໄມ້ (ຂຶ້ນລົດ)** ໄດ້ເຮັດຂຶ້ນ ທີ່ ................................................., ວັນທີ ................ ໄດ້ກວດກາຄວາມຖືກຕ້ອງຕາມຊະນິດ, ຈຳນວນ ແລະ ບໍລິມາດຕົວຈິງແລ້ວ. ຫາກກໍລະນີກວດພົບເຫັນຢູ່ດ່ານສົ່ງອອກວ່າມີການເອົາໄມ້ຈາກແຫຼ່ງອື່ນມາປົນ ຫຼື ບໍ່ສອດຄ່ອງຕາມໃບຢັ້ງຢືນຜະລິດຕະພັນໄມ້ສວນປູກ (ຂຶ້ນລົດ) ຕາມທີ່ຄະນະກຳມະການກວດກາ ແມ່ນເປັນຄວາມຮັບຜິດຊອບຂອງ ເຈົ້າຂອງໂຮງງານ, ແຕ່ຖ້າຫາກສະພາບຂອງການຫຸ້ມຫໍ່ຜະລິດຕະພັນໄມ້ຫາກຜິດປົກກະຕິ, ຊຶ່ງເຮັດໃຫ້ຕົວເລກຂອງຜະລິດຕະພັນໄມ້ ບໍ່ກົງກັບການຕົວເລກທີ່ເຈົ້າໜ້າທີລາຍງານ ແມ່ນເປັນຄວາມຮັບຜິດຊອບຂອງເຈົ້າຂອງລົດ. ດັ່ງນັ້ນ, ຄະນະກຳມະການກວດກາ ຈຶ່ງໄດ້ລົງລາຍເຊັນນີ້ໄວ້ຮ່ວມກັນ ເພື່ອເປັນຫຼັກຖານ.

ສຳລັບການກວດກາຜະລິດຕະພັນໄມ້ ສວນປູກ (ຂຶ້ນລົດ) ເພື່ອສົ່ງອອກ ແມ່ນບໍ່ມີການີບກົວ, ແຕ່ຕ້ອງໄດ້ຈົດທະບຽນ (ສັນຍາຊື້-ຂາຍ) ນຳຂະແໜງຄຸ້ມຄອງຊັບສິນຂອງລັດ ທຸກຄັ້ງ ກ່ອນສົ່ງອອກ, ຖ້າບໍ່ດັ່ງນັ້ນ ຈະບໍ່ອະນຸຍາດໃຫ້ສົ່ງອອກ.

**ຜູ້ອຳນວຍການໂຮງງານ/ບໍລິສັດ**

**ຄະນະກຳມະການກວດກາຜະລິດຕະພັນໄມ້**

1. ຊື່...............................................ລາຍເຊັນ.......................
2. ຊື່...............................................ລາຍເຊັນ.......................

**ຢັ້ງຢືນ ແລະ ຮັບຮອງໂດຍ**
**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ**